***<u>ມາປູກໝາກເຍົາຢ່າງຖືກຕ້ອງກັນເທາະ !</u>***



# ຄູ່ມືແນະນຳ ກ່ຽວກັບ ການປູກໝາກເຍົາ

## (ສະບັບຄັດຫຍໍ້ທີ່ອະທິບາຍສະເພາະເຕັກນິກການປູກ, ການເບິ່ງແຍ່ງຮັກສາ, ການເກັບກູ້ຜົນຜະລິດ)

**ສູນຄົ້ນຄ້ວາ-ທົດລອງພະລັງງານທົດແທນລາວ**
ຖະໜົນ ໂສກປ່າຫຼວງ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ສ ປປ ລາວ
ຕູ້.ປ.ນ 8010: ໂທລະສັບ: 21 353430;
ອີເມລ: contact@lao-ire.org Web: www.lao-ire.org

- <u>ພາກສະເໜີ ກ່ຽວກັບ ສູນຄົ້ນຄ້ວາ-ທົດລອງພະລັງງານທົດແທນລາວ ແລະ ຄູ່ມືແນະນຳ ກ່ຽວກັບ ການປູກໝາກເຍົາເຫຼັ້ມນີ້</u>

**ພາກສະເໜີ ກ່ຽວກັບ ສູນຄົ້ນຄ້ວາ-ທົດລອງພະລັງງານທົດແທນລາວ (ສທພ)**

**ສທພ** ແມ່ນສະຖາບັນຄົ້ນຄວ້າທີ່ເຮັດໜ້າທີ່ໃນການຄົ້ນຄວ້າທົດລອງທາງດ້ານ ພະລັງງານທົດແທນ ໂດຍໄດ້ດຳເນີນການຄົ້ນຄວ້າທົດລອງທາງດ້ານການປູກ ໝາກເຍົາ ເພື່ອທຳຄວາມເຂົ້າໃຈ ແລະ ເກັບກຳຂໍ້ມູນທີ່ເປັນປະໂຫຍດ ເພື່ອເຜີຍແຜ່ອອກສູ່ຊາວກະສິກອນໃນຊຸມຊົນທີ່ສົນໃຈປູກພືດຊະນິດນີ້.

**ຄຳນຳກ່ຽວກັບຄູ່ມືແນະນຳວິທີການປູກໝາກເຍົາສະບັບນີ້:**

ຄູ່ມືແນະນຳສະບັບນີ້ ໄດ້ຕອບສະໜອງຂໍ້ມູນຂ່າວສານກ່ຽວກັບເຕັກນິກການປູກໝາກເຍົາ. ມັນອາດມີຄວາມເປັນໄປໄດ້ວ່າບໍລິສັດທີ່ເຂົ້າໄປສົ່ງເສີມທ່ານໃຫ້ປູກ ພືດຊະນິດນີ້ ອາດຈະບໍ່ໄດ້ຕອບສະໜອງສິ່ງຊ່ວຍເຫຼືອທາງດ້ານວິຊາການ ຢ່າງພຽງພໍ. ໝາກເຍົາຈັດໄດ້ວ່າເປັນພືດເສດຖະກິດຊະນິດໜຶ່ງພາຍຫຼັງທີ່ໄດ້ຮັບການ ປຸງແຕ່ງເປັນນ້ຳມັນກະຊວນຊີວະພາບແລ້ວ. ຈົນເຖິງປະຈຸບັນນີ້, ຫຼາຍໆບໍລິສັດ ໄດ້ໃຫ້ຂໍ້ມູນທີ່ຈຳກັດ, ສຳລັບການປູກໝາກເຍົາ ໂດຍສະເພາະຂໍ້ມູນກ່ຽວກັບຜົນຜະລິດ (ແກ່ນ) ຕະຫຼອດຮອດເຕັກນິກການປູກ.

ຄູ່ມືສະບັບດັ່ງກ່າວນີ້ ໄດ້ຕອບສະໜອງພຽງແຕ່ຂໍ້ມູນທີ່ໄດ້ຈາກປະສົບການຂອງ ສທພ ທາງດ້ານການປູກໝາກເຍົາ. ຄູ່ມືດັ່ງກ່າວນີ້ຈະຊ່ວຍໃຫ້ທ່ານສາມາດປູກໝາກເຍົາໄດ້ຢ່າງຖືກວິທີ. ຖ້າຫາກວ່າທ່ານບໍ່ແນ່ໃຈວ່າຈະເລີ້ມຕົ້ນປູກໝາກເຍົາໄດ້ດ້ວຍວິທີໃດ, ທ່ານສາມາດອ່ານແຜ່ນພັບສະບັບທີ່ມີຊື່ວ່າ: “**ຄິດກ່ອນຈະຕັດ ສິນໃຈລົງມືປູກໝາກເຍົາ**”. ນອກຈາກນີ້, ທ່ານຍັງສາມາດອ່ານຂໍ້ມູນເພີ້ມເຕີມ ຈາກຫ້ອງການສົ່ງເສີມກະສິກຳ ແລະ ປ່າໄມ້ເມືອງ ຫຼື ຕິດຕໍ່ມາຍັງ ສທພ ຂອງພວກເຮົາໄດ້ໂດຍກົງເລີຍກໍ່ໄດ້.

# ຄູ່ມືແນະນຳ ກ່ຽວກັບ ການປູກໝາກເຍົາ: ສາລະບານ


- ພາກສະເໜີ ກ່ຽວກັບ ສທພ..........................................................................1
- ຄູ່ມືແນະນຳ ກ່ຽວກັບ ການປູກໝາກເຍົາ: ສາລະບານ....................................2

1. ພາກສະເໜີ ກ່ຽວກັບ ໝາກເຍົາ....................................................................3

2. ການຄັດເລືອກພື້ນທີ່ສຳລັບການປູກ:.........................................................4,5,6
   2.1 ການປູກໃນພື້ນທີ່ໃຫຍ່
   2.2 ການປູກເປັນຮົ້ວ
   2.3 ການປູກປະສົມປະສານກັບພືດອື່ນ

3. ເຕັກນິກຂະຫຍາຍພັນ:.........................................................................7,8,9
   3.1 ການກ້າເບ້ຍໃສ່ໜານຊາຍ
   3.2 ການກ້າເບ້ຍໃນຖົງຢາງກ້າເບ້ຍ
   3.3 ການຊຳງ່າ

4. ທ່ານຕ້ອງການເບ້ຍ/ທ່ອນພັນ?..................................................................10
5. ການເຄື່ອນຫຍ້າຍເບ້ຍ/ທ່ອນພັນໄປປູກໃນພື້ນທີ່....................................11,12
6. ການດູແລຮັກສາ:.......................................................................13,14,15,16
   6.1 ການຕັດແຕ່ງກິ່ງງ່າ
   6.2 ການກຳຈັດວັດສະພືດ
   6.3 ການກຳຈັດວັດສະພືດ ແລະ ການໃສ່ປຸ໋ຍ

7. ການເກັບກູ້ຜົນຜະລິດ: ໄລຍະເວລາ, ຄວາມພະຍາຍາມ ແລະ ຂັ້ນຕອນ ໃນການເກັບກູ້ຜົນຜະລິດ...........................................................................17
8. ການແກະເປືອກ ແລະ ການເກັບຮັກສາ.........................................................18
9. ປະຕິທິນສຳລັບການປູກໝາກເຍົາ.................................................................19
10. ການຈຳໜ່າຍແກ່ນໝາກເຍົາ.......................................................................20




# 1. ພາກສະເໜີ ກ່ຽວກັບ ໝາກເຍົາ

## ໝາກເຍົາແມ່ນຫຍັງ?

ໝາກເຍົາແມ່ນພືດທີ່ໃຫ້ຜົນຜະລິດແກ່ນ ເຊິ່ງໃນແກ່ນຂອງພືດຊະນິດນີ້ປະກອບດ້ວຍນ້ຳມັນ 25-35%. ພືດສະນິດນີ້ມີອາຍຸຍືນເຖິງ 15-20 ປີ ແລະ ສາມາດນຳມາຂະຫຍາຍພັນໄດ້ດ້ວຍ ງ່າ ຫຼື ແກ່ນພັນ. ທຸກສິ້ນສ່ວນຂອງໝາກເຍົາຈະມີທາດເບື່ອ (ແກ່ນ, ໃບ ແລະ ກິ່ງກ້ານ) ເຊິ່ງເຮັດໃຫ້ສັດບໍ່ປາດຖະໜາທີ່ຈະກິນພືດຊະນິດນີ້.

## ເປັນຫຍັງຈິ່ງປູກໝາກເຍົາ?

ບາງບໍລິສັດສົນໃຈທີ່ຈະຊື້ແກ່ນໝາກເຍົາເພື່ອນຳໄປຜະລິດເປັນນ້ຳມັນກະຊວນຊີວະພາບ. ຍິ່ງໄປກວ່ານັ້ນ, ຜູ້ຄົນສ່ວນໃຫຍ່ຍັງຖົກຖຽງກັນວ່າໝາກເຍົາແມ່ນພືດເສດຖະກິດເຊັ່ນດຽວກັນກັບຢາສູບ, ກາເຟ ຫຼື ຜະລິດຕະພັນກະສິກຳອື່ນໆທີ່ສາມາດປູກໄດ້ໂດຍທີ່ບໍ່ຕ້ອງມີ ຄວາມພະຍາຍາມສູງ. ແຕ່ເຖິງຢ່າງໃດກໍ່ຕາມ, ຍັງບໍ່ທັນມີໃຜສາມາດພິສູດໄດ້ວ່າການ ປູກໝາກເຍົາຈະສາມາດໃຫ້ຜົນຜະລິດທີ່ເປັນເງິນໄດ້ຢ່າງຄຸ້ມຄ່າກັບຊາວກະສິກອນ.

## ມີຄວາມເປັນໄປໄດ້ແນວໃດທີ່ຈະຜະລິດນ້ຳມັນກະຊວນຊີວະພາບຈາກແກ່ນໝາກເຍົາ?

ເຮົາສາມາດນຳເອົາແກ່ນໝາກເຍົາມາບີບ ໂດຍໃຊ້ເຄື່ອງຈັກບີບສະເພາະເພື່ອສະກັດເອົາ ນ້ຳມັນອອກມາ. ນ້ຳມັນໝາກເຍົາດັ່ງກ່າວສາມາດນຳໄປໃຊ້ໄດ້ເລີຍກັບເຄື່ອງຈັກກະຊວນ ທີ່ໄດ້ຮັບການດັດແປງມາເພື່ອໃຊ້ກັບນ້ຳມັນຊະນິດນີ້. ແຕ່ເຖິງຢ່າງໃດກໍ່ຕາມ, ການນຳໃຊ້ນ້ຳມັນໝາກເຍົາແທນນ້ຳມັນກະຊວນ ກັບລົດໄຖນາເດີນຕາມ ກໍ່ສາມາດເຮັດໃຫ້ເປັນອັນຕະລາຍແກ່ເຄື່ອງຈັກໄດ້. ວິທີອື່ນທີ່ດີກວ່ານີ້ກໍ່ຄືການນຳເອົານ້ຳມັນໝາກເຍົາໄປຜະລິດເປັນນ້ຳມັນກະຊວນຊີວະພາບໃນໂຮງງານຜະລິດຂະໜາດນ້ອຍ. ຄວາມຮ້ອນ ແລະ ສານເຄມີຈຳນວນໜຶ່ງ ແມ່ນມີຄວາມຈຳເປັນທີ່ຈະເຮັດໃຫ້ນ້ຳມັນໝາກເຍົາກາຍເປັນນ້ຳມັນກະຊວນຊີວະພາບ. ນ້ຳມັນກະຊວນຊີວະພາບທີ່ຜະລິດໄດ້ນີ້ຈະສາມາດນຳໃຊ້ໄດ້ເລີຍກັບເຄື່ອງ ຈັກກະຊວນທຸກຊະນິດ.

## 2. ການຄັດເລືອກພື້ນທີ່ດິນ ສຳລັບ ການປູກໝາກເຢົາ

### 2.1 ການປູກໃນພື້ນທີ່ກວ້າງ ຫຼື ພື້ນທີ່ຂະໜາດໃຫຍ່

1) ເລືອກພື້ນທີ່ທີ່ເໝາະສົມ:



- ພື້ນທີ່ຄ້ອຍຊັນມີຄວາມເໝາະສົມ
- ພື້ນທີ່ພຽງກໍ່ຍິ່ງເໝາະສົມ, ຍົກເວັ້ນ:



- ຕ້ອງບໍ່ແມ່ນພື້ນທີ່ທີ່ໃຊ້ເພື່ອການປູກເຂົ້າ



- ຕ້ອງບໍ່ແມ່ນພື້ນທີ່ທີ່ມີນ້ຳຖ້ວມຂັງ

2) ຖາງ, ຈູດ ແລະ ຮື້ ໄມ້ພຸ່ມອອກຈາກພື້ນທີ່ທີ່ຈະປູກ



- ຖາງ, ຈູດ ແລະ ຮື້ໄມ້ພຸ້ມເຕ້ຍ ແລະ ວັດຊະພືດອອກໃຫ້ໝົດ
- ເສດວັດຊະພືດ ແລະ ຮາກພືດທີ່ມີຂະໜາດໃຫຍ່ຄວນຖືກເກັບອອກໃຫ້ໝົດຈາກພື້ນທີ່

ຄວນກຽມພື້ນທີ່ເມື່ອເວລາໃດ? ຄວນກຽມ ພື້ນທີ່ໃນທ້າຍລະດູແລ້ງຕໍ່ໃສ່ຕົ້ນລະດູຝົນ (ເດືອນກຸມພາ ຫາ ເດືອນມີນາ)



## 2. ການຄັດເລືອກພື້ນທີ່ດິນສຳລັບການປູກໝາກເຢົາ (ຕໍ່)

### 2.2 ການປູກເປັນຮົ້ວ

1) ຮົ້ວອ້ອມສວນ-



2) ຮົ້ວອ້ອມເຮືອນ



3) ຮົ້ວອ້ອມທົ່ງຫຍ້າ



4) ຮົ້ວແຄມທາງ



ຄວາມຍາວຂອງຮົ້ວທີ່ຈະປູກຄວນຢູ່ໃນຂະໜາດ 500 ມ / ຄອບຄົວ!

## 2. ການຄັດເລືອກພື້ນທີ່ດິນສຳລັບການປູກໝາກເຍົາ (ຕໍ່)

### 2.2 ການປູກເຍົາແບບປະສົມປະສານກັບພືດຊະນິດອື່ນ

1) **ການຄັດເລືອກພືດ:** ພືດທີ່ເໝາະສົມທີ່ຈະນຳມາປະສົມປະສານກັບໝາກເຍົາໄດ້ແກ່: **ພືດຕະກູນຖົ່ວ, ເຂົ້າໄຮ່, ແລະ ພືດຜັກ**



2) ໄລຍະຫ່າງຂອງການປູກ:

- ການປູກພືດປະສົມປະສານແບບຊົ່ວຄາວ.

(ໄລຍະ 2 ປີ ທຳອິດ) 3 ມ x 3 ມ: ພາຍໃນ 3 ປີ ທຳອິດແນະນຳໃຫ້ປູກພືດຕະກູນຖົ່ວ, ເຂົ້າໄຮ່ ຫຼື ພືດຜັກຮ່ວມກັບໝາກເຍົາ




- **ການປູກພືດປະສົມປະສານແບບຖາວອນຄວນ ປູກດ້ວຍໄລຍະຫ່າງຂອງແຖວທີ່ກວ້າງກວ່າ.** ເພື່ອໃຫ້ສາມາດປູກພືດຊະນິດອື່ນຮ່ວມໄດ້. ໄລຍະຫ່າງລະຫວ່າງແຖວຂຶ້ນຢູ່ກັບພືດທີ່ຈະນຳມາ ປູກຮ່ວມ, ໂດຍທົ່ວໄປແມ່ນປະມານ 5 ມ.

ຖ້າທ່ານຍັງບໍ່ທັນມີຄວາມແນ່ໃຈຕໍ່ກັບການປູກໝາກເຍົາ, ການປູກພືດປະສົມປະສານກັບ ການປູກໝາກເຍົາແມ່ນເປັນວິທີທີ່ເໝາະສົມສຳລັບທ່ານທີ່ຕ້ອງການທົດລອງ. ຂອບໃຈທີ່ທ່ານເລືອກທີ່ຈະເລີ້ມຕົ້ນດ້ວຍການປູກພືດປະສົມປະສານກັບການປູກໝາກເຍົາ ເຊັ່ນ: ເຂົ້າໄຮ່ໃນໄລຍະ **1** ປີ ທຳອິດ. ໝາກເຍົາຈະໃຫ້ຜົນຜະລິດຢ່າງສົມເຫດສົມຜົນ ພາຍຫຼັງການປູກໄດ້ **3** ປີ.



## 3. ເຕັກນິກການຂະຫຍາຍພັນ

### 3.1 ການກ້າເບ້ຍໃສ່ໝານຊາຍ





**1) ການສ້າງໝານຊາຍ.**

- ໝານຊາຍຄວນມີຊາຍຮອງພື້ນໜາ ຢ່າງໜ້ອຍ 20 ຊມ.

**2) ຂັ້ນຕອນການກ້າແກ່ນ.**

- ຢາຍແກ່ນໃສ່ໃຫ້ທົ່ວໝານຊາຍ.ຫຼັງຈາກນັ້ນ, ນຳເອົາຂີ້ຊາຍມາປົກບາງໆ.



**3) ການແຕກງອກ.**

- ແກ່ນຈະເລີ້ມແຕກງອກຫຼັງຈາກການຫວ່ານລົງໝານຊາຍພາຍໃນ 5-7 ວັນ.
- ຫຼັງຈາກນັ້ນ, ກໍ່ໃຊ້ມືດຶງເບ້ຍອອກມາດ້ວຍຄວາມລະມັດລະວັງ ແລະ ຫ້າມບໍ່ໃຫ້ຮາກໄດ້ຮັບການກະທົບກະເທືອນ.
- ນຳເອົາເບ້ຍໄປບົງໃສ່ໃນເບົ້າທີ່ຕຽມໄວ້ໃນເຮືອນກ້າເພື່ອອະນຸບານໄວ້ອີກປະມານ 1.5-2 ເດືອນ.

ເລືອກເອົາແກ່ນທີ່ດີເພື່ອທີ່ຈະເອົາມາກ້າແລະ ເບ້ຍທີ່ແຂງແຮງດີເພື່ອເອົາໄປປູກ

## 3. ເຕັກນິກການຂະຫຍາຍພັນ (ຕໍ່)

### 3.2 ການກ້າເບ້ຍໃສ່ຖົງຢາງປຼັສຕິກ



**1) ສ້າງເຮືອນກ້າ**

- ຫາວັດຖຸທີ່ມີຢູ່ໃນທ້ອງຖິ່ນມາມຸງເຮືອນກ້າ
- ເຮືອນກ້າຂະໜາດ 1 ມ² ສາມາດກ້າ ເບ້ຍໝາກເຍົາໄດ້ 100 ເບ້ຍ.
- ທີ່ຕັ້ງ: ຄວນຢູ່ໃກ້ກັບພື້ນທີ່ປູກ
- ເມື່ອໃດ?: ຄວນກຽມເຮືອນກ້າໃນລະ ຫວ່າງ ເດືອນມີນາ ຫາ ເດືອນເມສາ

**2) ການກະກຽມຖົງຢາງຮ່າຍເບົ້າ**

- **ເມື່ອໃດ?:** ເດືອນມີນາ/ເດືອນເມສາ
- ປະສົມ ຊາຍ, ດິນ ແລະ ຝຸ່ນຄອກ ເຂົ້າກັນ
- ນຳເອົາສ່ວນປະສົມທັງໝົດລົງໃນຖົງຢາງ
- ນຳເອົາແກ່ນໝາກເຍົາຈຳນວນ 2 ແກ່ນ ລົງໄປກ້າໃສ່ຖົງຢາງ (2 ແກ່ນ/ຖົງ)
- ຫຼັງຈາກນັ້ນ, 1 ອາທິດ, ແກ່ນກໍ່ຈະເລີ່ມງອກ.
- ບົວລະບັດຮັກສາດ້ວຍການຫົດນ້ຳ

- **ໄລຍະເວລາ:** ເບ້ຍໝາກເຍົາຈະສາມາດເຄື່ອນຍ້າຍໄປປູກໃນພື້ນທີ່ປູກໄດ້ ພາຍຫຼັງທີ່ມີ ອະນຸບານໃນເຮືອນກ້າເບ້ຍໄດ້ປະມານ 1.5-2 ເດືອນ ເຊິ່ງພວກມັນຈະມີຄວາມສູງ ປະມານ 30 – 50 ຊມ.

- **ໝາຍເຫດ:** ຖົງຢາງຄວນຖືກຖອດອອກກ່ອນນຳໄປປູກລົງຂຸມ.



## 3. ເຕັກນິກການຂະຫຍາຍພັນ (ຕໍ່)

### 3.3 ການຊຳງ່າ

1) **ຄັດເລືອກທ່ອນພັນ:** ໝາກເຍົາສາມາດຂະຫຍາຍພັນໄດ້ດ້ວຍທ່ອນພັນ ເຊິ່ງມີຂັ້ນຕອນດັ່ງຕໍ່ໄປນີ້:

- ຄັດເລືອກເອົາງ່າແກ່ທີ່ຊຽວອິ່ມນ້ຳຕາມຈາກຕົ້ນແມ່ພັນທີ່ມີອາຍຸ 3 ປີ ຂຶ້ນໄປ.
- ຕັດງ່າໃຫ້ມີຂະໜາດຄວາມຍາວ ປະມານ 30-50 ຊມ.
- ແຕ່ລະງ່າຄວນມີເສັ້ນຜ່າສູນກາງຢ່າງໜ້ອຍ ປະມານ 2-3 ຊມ.



2) **ຂັ້ນຕອນການຊຳງ່າ**



- ທ່ອນພັນທີ່ຕັດຈາກຕົ້ນແມ່ພັນມາໃໝ່ ຄວນນຳໄປ ຊຳໃສ່ໃນຖົງຢາງທີ່ຕຽມໄວ້ທັນທີ (ຫ້າມບໍ່ໃຫ້ເກັບຮັກສາໄວ້ດົນ).
- ຕ້ອງນຳເອົາສ່ວນປະສົມຂອງດິນ (ດັ່ງທີ່ອະທິບາຍ ໄວ້ໃນໜ້າກ່ອນໆ) ລົງໃສ່ໃນຖົງຢາງກ່ອນນຳທ່ອນພັນໄປຊຳ.
- ທ່ອນພັນສາມາດນຳໄປປູກໄດ້ໂດຍກົງໃນພື້ນທີ່ປູກ ຫຼື ຮົ້ວ.

## 4. ທ່ານຕ້ອງການເບ້ຍ/ທ່ອນພັນຫຼາຍປານໃດ?




**800 ເບ້ຍ/ໄລ່ ສໍາລັບ ການປູກໃນໄລຍະຫ່າງ 1 ມ x 1 ມ:**

**ຈຸດດີ:** ໄດ້ກໍາຈັດວັດສະພືດໜ້ອຍໃນປີທໍາອິດ

**ຈຸດອ່ອນ:** ຍຸ້ງຍາກສໍາລັບການກູ້ຜົນຜະລິດແກ່ນ; ຕ້ອງການເບ້ຍຫຼາຍ




**400 ເບ້ຍ/ໄລ່ ສໍາລັບການປູກໃນໄລຍະຫ່າງ 2 ມ x 2 ມ:**




**170 ເບ້ຍ/ໄລ່ ສໍາລັບການປູກໃນໄລຍະຫ່າງ 3 ມ x 3 ມ:**

**ຈຸດດີ:** ເໝາະສົມສໍາລັບການປູກປະສົມປະສານ ກັບພືດອື່ນແບບຊົ່ວຄາວໃນປີທີ 1.

**ຈຸດອ່ອນ:** ຈໍານວນຕົ້ນໝາກເຢົາໜ້ອຍ.



## 5. ການເຄື່ອນຍ້າຍເບ້ຍ/ທ່ອນພັນທີ່ຊໍາແລ້ວໄປປູກໃນພື້ນທີ່ປູກ




**1) ການຂຸດຂຸມ:**

ຂຸດຂຸມໃຫ້ພໍດີກັບຖົງກ້າເບ້ຍ ຫຼື ຕາມຂະໜາດທີ່ໄດ້ສະແດງໃຫ້ເຫັນໃນຮູບພາບດ້ານຊ້າຍ. ຫຼັງຈາກນັ້ນ, ຈຶ່ງນໍາເອົາຝຸ່ນ ຄອກໄປຮອງກົ້ນຂຸມ. (ສໍາຄັນ!)




**2). ການເຄື່ອນຍ້າຍເບ້ຍໄປປູກລົງຂຸມທີ່ຕຽມໄວ້.**

- ເມື່ອເບ້ຍມີຄວາມພ້ອມທີ່ນໍາໄປປູກໃນພື້ນທີ່ (1-2 ເດືອນ ຫຼັງການກ້າ), ພື້ນທີ່ປູກຕ້ອງຖືກກະກຽມໄວ້ໃຫ້ສໍາເລັດ!
- ເມື່ອໃດ?: ລະດູການປູກທີ່ເໝາະສົມຄວນຢູ່ໃນຕົ້ນລະດູຝົນ (ເດືອນພຶດສະພາ ຫາ ເດືອນ ມິຖຸນາ).
- ກ່ອນການເຄື່ອນຍ້າຍເບ້ຍໄປປູກ, ຕ້ອງຮັບປະກັນວ່າທຸກສິ່ງທຸກຢ່າງກຽມ ພ້ອມແລ້ວ
- ການເຄື່ອນຍ້າຍເບ້ຍໄປປູກຄວນປະຕິບັດໃນຕອນເຊົ້າ ຫຼື ຕ່ອນຄ້າຍແລງ (ຊ່ວງແດດອ່ອນ)ເພື່ອປ້ອງກັນບໍ່ໃຫ້ເບ້ຍໄດ້ຮັບຜົນກະທົບຈາກແສງແດດກ້າ.

## 5. ການເຄື່ອນຍ້າຍເບ້ຍ/ທ່ອນພັນທີຊໍາແລ້ວໄປປູກໃນພື້ນທີ່ປູກ (ຕໍ່)

**3) ການປູກໃນພື້ນທີ່**



ກະກຽມຂຸມໃຫ້ພ້ອມກ່ອນລົງມືປູກ.

ເມື່ອໃດ?: ເວລາທີ່ເໝາະສົມທີ່ສຸດທີ່ຈະປູກທ່ອນພັນຄວນຢູ່ໃນຊ່ວງຕົ້ນລະດູຝົນ.

ສໍາລັບການປູກໃນພື້ນທີ່ໃຫຍ່ແນະນໍາໃຫ້ປູກດ້ວຍເບ້ຍ.

**ໄລຍະຫ່າງ:** ແນະນໍາໃຫ້ເບິ່ງຄືນໜ້າທີ່ 10.

**4) ການປູກເປັນຮົ້ວ**



ສໍາລັບການປູກເປັນຮົ້ວ, ທ່ານສາມາດນໍາເອົາ ເບ້ຍ ຫຼື ທ່ອນພັນໄປປູກໂດຍກົງ ເລີຍກໍ່ໄດ້.

ເມື່ອໃດ?: ເວລາທີ່ເໝາະສົມທີ່ສຸດທີ່ຈະປູກທ່ອນ ພັນຄວນຢູ່ໃນຊ່ວງຕົ້ນລະດູຝົນ.

**ໄລຍະຫ່າງ:** ຄວນປູກທ່ອນພັນເປັນແຖວດຽວ ເຊິ່ງໄລຍະຫ່າງລະຫວ່າງຕົ້ນແມ່ນ 25-50 ຊມ ຫຼື ປູກ 2 ແຖວ ຕິດກັນ ເຊິ່ງມີໄລຍະຫ່າງລະ ຫວ່າງແຖວແມ່ນ 30-50 ຊມ.

ເວລາທີ່ຕົ້ນໝາກເຍົາຈະເລີນເຕີບໂຕເຕັມທີ່ແລ້ວ, ແນະນໍາໃຫ້ຕັດປາຍຂອງລໍາຕົ້ນໃຫ້ເຫຼືອ ຄວາມສູງຂອງລໍາຕົ້ນໄວ້ປະມານ 1 ມ ຈາກໜ້າດິນ!



## 6. ການດູແລຮັກສາ

**6.1 ການຕັດແຕ່ງກິ່ງງ່າ**

**1) ວັດຖຸປະສົງ**: ການຕັດແຕ່ງກິ່ງງ່າກໍ່ເພື່ອຮັກສາຄວາມສູງ ແລະ ໂຄງສ້າງລໍາຕົ້ນ ໃຫ້ມີຄວາມເໝາະສົມ.!

- ຄໍາເຕືອນ: ວັດຖຸປະສົງຕົ້ນຕໍຂອງການປູກໝາກເຍົາບໍ່ແມ່ນເພື່ອຕ້ອງການໃຫ້ຕົ້ນ ຈະເລີນເຕີບໂຕ ແລະ ມີງ່າຫຼາຍ, ແຕ່ຕ້ອງການຜົນຜະລິດແກ່ນສູງສຸດ

- ຄວນໃຊ້ມີດ ຫຼື ພ້າທີ່ຄົມໆຕັດງ່າຂອງຕົ້ນໝາກເຍົາ. ການຕັດຄວນຕັດໄປລວງດຽວ ແລະ ຫ້າມຕັດເຈັ້ຍຫຼາຍຈົນເກີນໄປ.

ຈົ່ງລະມັດລະວັງຢ່າງໃຫ້ມີດ/ພ້າຖືກຕົນເອງໃນລະຫວ່າງການຕັດ.





- ເບິ່ງຮູບພາບຂ້າງເທິງ! ໂຄງສ້າງຂອງຕົ້ນໝາກເຍົາທີ່ເໝາະສົມ.

# 6. ການດູແລຮັກສາ (ຕໍ່)

## 6.1 ການຕັດແຕ່ງກິ່ງງ່າ (ຕໍ່)





**2). ການຕັດແຕ່ງກິ່ງງ່າຄັ້ງທຳອິດ.**

ເມື່ອໃດ?: ສິ້ນສຸດລະດູແລ້ງ. ຕັດລຳຕົ້ນໃນລະດັບສູງຈາກໜ້າດິນປະມານ 30 ຊມ.

ຈຸດປະສົງກໍ່ ເພື່ອກະຕຸ້ນໃຫ້ລຳຕົ້ນຜະລິດງ່າທາງຂ້າງອອກເປັນຈຳນວນຫຼາຍ ເພື່ອ ຮັບເອົາແສງສະຫວ່າງ





**3) ການຕັດແຕ່ງກິ່ງງ່າຄັ້ງທີ 2:**

ເມື່ອໃດ?: ການຕັດແຕ່ງກິ່ງງ່າຄັ້ງທີ່ 2 ຄວນປະຕິບັດໃນທ້າຍລະດູແລ້ງ. ຕ້ອງຕັດງ່າ ດ້ານຂ້າງໃຫ້ເຫຼືອຄວາມ ຍາວຈາກລຳຕົ້ນໄວ້ປະມານ 30-40 ຊມ.



# 6. ການດູແລຮັກສາ (ຕໍ່)

## 6.1 ການກຳຈັດວັດສະພືດ





- ເຊັ່ນດຽວກັນກັບພືດເສດຖະກິດຊະນິດອື່ນໆ ເຊັ່ນ: ຢາງພາລາ, ໄມ້ໃຫ້ໝາກ, ການກຳຈັດວັດຊະພືດອອກຈາກພື້ນທີ່ປູກໝາກເຍົາແມ່ນມີຄວາມສຳຄັນ ແລະ ຈຳເປັນ. ຖ້າຫາກວ່າ ປ່ອຍໃຫ້ວັດສະພືດປົກຄຸມພື້ນທີ່ປູກຫຼາຍກໍ່ຈະເຮັດໃຫ້ຕົ້ນໝາກເຍົາຈະເລີນເຕີບໂຕຊ້າ.
- ເມື່ອໃດ?: ການກຳຈັດວັດຊະພືດຄັ້ງທຳອິດຄວນປະຕິບັດຫຼັງການປູກໄດ້ 1 ເດືອນ. ຫຼັງຈາກນັ້ນ, ແນະນຳໃຫ້ກຳຈັດວັດຊະພືດເປັນປະຈຳໃນຊ່ວງລະດູຝົນ. (ເບິ່ງປະຕິທິນການປູກໝາກເຍົາໃນໜ້າສຸດທ້າຍຂອງເອກະສານນີ້).
- ຄວາມພະຍາຍາມ: ຈົ່ງພິຈາລະນາເຖິງວຽກງານທີ່ຊ້ອນກັນ ແລະ ການຂາດແຮງງານໃນລະດູຝົນ. ການກຳຈັດວັດຊະພືດເປັນວຽກງານທີ່ຕ້ອງປະຕິບັດຢ່າງເອົາຈິງ ເອົາຈັງ! ຄວາມພະຍາຍາມສຳລັບການກຳຈັດວັດຊະພືດແມ່ນມີຄວາມສຳຄັນຫຼາຍ ໂດຍສະເພາະໃນຊ່ວງໄລຍະປີທຳອິດຫຼັງການປູກ. ເຖິງຢ່າງໃດກໍ່ຕາມ, ຕົ້ນໝາກເຍົາຈະສາມາດປົກຄຸມພື້ນທີ່ໄດ້ພາຍຫຼັງທີ່ຈະເລີນເຕີບໂຕເຕັມທີ່ເຊິ່ງຈະຊ່ວຍຫຼຸດ ຜ່ອນແຮງງານໃນການກຳຈັດວັດຊະພືດໄດ້.

# 6. ການດູແລຮັກສາ (ຕໍ່)

**6.1 ການກຳຈັດວັດສະພືດ ແລະ ການໃສ່ປຸ່ຍ**



**1) ການເສຍຫຍ້າ.**

▪ ເສຍຫ້ຍາອ້ອມຕົ້ນໝາກເຍົາ ຢ່າງເປັນປົກກະຕິ ແລະ ໃຫ້ຮັບປະກັນວ່າບໍ່ໃຫ້ຮາກຂອງຕົ້ນໝາກເຍົາໄດ້ຮັບການກະທົບກະເທືອນ. ສິ່ງນີ້ ແມ່ນບັນຫາທີ່ສຳຄັນທີ່ສຸດ.



**2) ການຈັດການກັບວັດສະພືດທີ່ຖືກເສຍອອກຈາກຕົ້ນໝາກເຍົາ.**

ຫຼັງຈາກເສຍຫຍ້າອ້ອມຕົ້ນໝາກເຍົາແລ້ວ, ໃຫ້ນຳເອົາຫຍ້າດັ່ງກ່າວກັບຄືນໄປປົກຄຸມໂຄນຕົ້ນໝາກເຍົາໄວ້ເພື່ອຮັກສາຄວາມຊຸ່ມ ແລະ ກາຍເປັນປຸ່ຍ. ດັ່ງສະແດງໃຫ້ເຫັນໃນຮູບພາບ.



**3) ການໃສ່ຝຸ່ນ.**

- ຄວນໃສ່ຝຸ່ນຄອກ ໃນ ອັດຕາ 2 kg/ຕົ້ນ/ປີ ໂດຍແບ່ງໃສ່ 2 ຄັ້ງ ໃນຊ່ວງລະດູຝົນ.

- ຄວນພອນດິນອ້ອມຕົ້ນກ່ອນໃສ່ຝຸ່ນ.

**ການດູແລຮັກສາຕົ້ນໝາກເຍົາ.**

ຖ້າຫາກທ່ານປະຕິບັດຕາມ 3 ບາດກ້າວ ທີ່ກ່າວມານີ້, ຕົ້ນໝາກເຍົາຂອງທ່ານຈະຈະເລີນເຕີບໂຕ ແລະ ໃຫ້ຜົນຜະລິດດີຂຶ້ນ!

16

# 7. ການເກັບກູ້ຜົນຜະລິດ: ໄລຍະເວລາ, ຄວາມເອົາໃຈໃສ່ ແລະ ຂັ້ນຕອນໃນການເກັບກູ້







**1) ເມື່ອໃດ?**

▪ ລະດູການເກັບກູ້ໝາກເຍົາແມ່ນເລີ່ມຕັ້ງແຕ່ ເດືອນມິຖຸນາ ຫາ ເດືອນພະຈິກ

**2) ຄວາມເອົາໃຈໃສ່ໃນ.**

▪ ໃນປີທີ 1, ຄວາມເອົາໃຈໃສ່ເຂົ້າໃນການເກັບກ່ຽວຈະຕ່ຳຫຼາຍ.

▪ ຫຼັງຈາກປີທີ 2 ໄປແລ້ວ, ການໃຫ້ຜົນຜະລິດແກ່ນຈະເລີ່ມຕັ້ງແຕ່ ເດືອນມິຖຸນາ ຫາ ເດືອນພະຈິກ. ຈົ່ງຮັບປະກັນວ່າທ່ານຈະມີແຮງງານພຽງພໍໃນຊ່ວງໄລຍະເວລານີ້ ແລະ ຈົ່ງພິຈາລະນາວ່າທ່ານສາມາດຈັດສັນເວລາຂອງທ່ານໄດ້ (ການປູກເຂົ້າ / ການເກັບກູ້!)

**3) ຂະບວນການເກັບກູ້:**

▪ ຄວນເກັບໝາກທີ່ມີສີເຫຼືອງ ຫຼື ສີເຫຼືອງເຂັ້ມ

▪ ນຳເອົາໝາກທີ່ເກັບມາຈາກຕົ້ນໄປຕາກແດດ ເພື່ອໃຫ້ແກ່ນຫຼຸດອອກມາຈາກເປືອກ ແລະ ຫຼັງຈາກນັ້ນຈຶ່ງນຳໄປເກັບຮັກສາໄວ້ໃນເປົາ.

▪ **ໂດຍສະເພາະພິເສດໃນລະຫວ່າງລະດູຝົນ, ການເກັບກູ້ຜົນຜະລິດແກ່ນຕ້ອງປະຕິບັດໃນເວລາທີ່ຖືກຕ້ອງ. ບໍ່ດັ່ງນັ້ນ, ແກ່ນຈະງອກຄ່າຕົ້ນ.**

17

## 8. ການແກະເປືອກ ແລະ ເກັບຮັກສາແກ່ນ



1) ພາຍຫຼັງການເກັບໝາກມາແລ້ວ, ຈິ່ງແກະເອົາແກ່ນອອກຈາກເປືອກໄວເທົ່າທີ່ຈະໄວໄດ້.



2) ນຳເອົາແກ່ນໄປຕາກແດດຢ່າງໜ້ອຍ 1 ວັນ.



3) ອະນາໄມແກ່ນໂດຍການນຳເອົາເສດຕ່າງໆອອກເຊັ່ນ: ຂີ້ຫີນ, ດິນ, ກິ່ງງ່າ. ໃນຂັ້ນຕອນນີ້, ແນະນຳໃຫ້ໃຊ້ຕາໜ່າງຮ່ອນ ຫຼື ໃຊ້ພັດລົມເປົ່າ.



4) ເກັບຮັກສາແກ່ນໄວ້ໃນຫ້ອງທີ່ແຫ້ງ ແລະ ປາດສະຈາກແມງໄມ້.

5) ເວລາຜ່ານໄປ, ຖ້າປະກົດເຫັນວ່າແກ່ນຍັງຄົງຖືກທຳລາຍຈາກແມງໄມ້ ຈິ່ງນຳເອົາແກ່ນມາຕາກແດດອີກຄັ້ງ.

**ສິ່ງທີ່ຄວນເອົາໃຈໃສ່ໃນການດູແລຮັກສາແກ່ນໝາກເຍົາ!**

ຖ້າທ່ານບໍ່ ຕາກ ແລະ ເກັບມ້ຽນແກ່ນໝາກເຍົາໄວ້ຢ່າງຖືກວິທີ, ທ່ານອາດຈະບໍ່ສາມາດຂາຍແກ່ນ ໝາກເຍົາຂອງທ່ານໄດ້ຕາມລາຄາທີ່ເຄີຍຕົກລົງກັນໄວ້ກັບຜູ້ເກັບຊື້.



## 9. ປະຕິທິນປູກໝາກເຍົາ

### ປີທີ 1

| ມັງກອນ | ກຸມພາ | ມີນາ | ເມສາ | ພຶດສະພາ | ມິຖຸນາ | ກໍລະກົດ | ສິງຫາ | ກັນຍາ | ຕຸລາ | ພະຈິກ | ທັນວາ |
|---|---|---|---|---|---|---|---|---|---|---|---|
| | | ສ້າງເຮືອນກ້າ | ກ້າແກ່ນ | ປູກ | ປູກ | ກຳຈັດວັດຊະພືດ | ກຳຈັດວັດຊະພືດ | ກຳຈັດວັດຊະພືດ | ກຳຈັດວັດຊະພືດ | ກຳຈັດວັດຊະພືດ | ກຳຈັດວັດຊະພືດ |
| | | ກຽມຖົງຢາງຮ່າຍເບົ້າ | ຊຳງ່າ | 2 ກຽມດິນ | | | | | | | |
| | | | ເດືອນຍ້າຍໄປປູກ | | | | | | | | |
| | | | 1 ກຽມດິນ | | | | | | | | |

### ປີທີ 2

| ມັງກອນ | ກຸມພາ | ມີນາ | ເມສາ | ພຶດສະພາ | ມິຖຸນາ | ກໍລະກົດ | ສິງຫາ | ກັນຍາ | ຕຸລາ | ພະຈິກ | ທັນວາ |
|---|---|---|---|---|---|---|---|---|---|---|---|
| ກຳຈັດວັດຊະພືດ | ຕັດແຕ່ງງ່າ | | ກຳຈັດວັດຊະພືດ | | ກຳຈັດວັດຊະພືດ | | ເກັບກູ້ຜົນຜະລິດ | | ເກັບກູ້ຜົນຜະລິດ | ເກັບກູ້ຜົນຜະລິດ | |
| | | | | | | | ເກັບກູ້ຜົນຜະລິດ | | | | |

### ປີທີ 3

| ມັງກອນ | ກຸມພາ | ມີນາ | ເມສາ | ພຶດສະພາ | ມິຖຸນາ | ກໍລະກົດ | ສິງຫາ | ກັນຍາ | ຕຸລາ | ພະຈິກ | ທັນວາ |
|---|---|---|---|---|---|---|---|---|---|---|---|
| ກຳຈັດວັດຊະພືດ | ຕັດແຕ່ງງ່າ | | ກຳຈັດວັດສະພືດ | ໃສ່ຝຸ່ນ | ເກັບກູ້ຜົນຜະລິດ | ເກັບກູ້ຜົນຜະລິດ | ເກັບກູ້ຜົນຜະລິດ | ເກັບກູ້ຜົນຜະລິດ | ເກັບກູ້ຜົນຜະລິດ | ເກັບກູ້ຜົນຜະລິດ | |
| | | | | | ເກັບກູ້ຜົນຜະລິດ | | ເກັບກູ້ຜົນຜະລິດ | | ເກັບກູ້ຜົນຜະລິດ | | |

# 10. ການຈຳໜ່າຍແກ່ນໝາກເຢົາ

- ອີງຕາມປະສົບການຂອງສູນຄົ້ນຄ້ວາ-ທົດລອງພະລັງງານທົດແທນລາວໃນໄລຍະ ຜ່ານມາ, ແກ່ນໝາກເຢົາທີ່ມີຄຸນນະພາບດີຈະມີລາຄາຕັ້ງແຕ່ 700 ຫາ 1,000 ກີບຕໍ່ ກິໂລ.
- ຂໍແນະນຳໃຫ້ທ່ານສອບຖາມເພື່ອນບ້ານໄກ້ຄຽງກ່ຽວກັບການຊື້-ຂາຍແກ່ນໝາກເຢົາ.
- ມັນຈະເປັນການດີກວ່າທີ່ຈະຮ່ວມກຸ່ມກັນ ເພື່ອຈຳໜ່າຍແກ່ນໝາກເຢົາໃນຈຳນວນຫຼາຍໆໃຫ້ກັບພໍ່ຄ້າຄົນກາງ. ວິທີດັ່ງກ່າວນີ້ຈະເຮັດໃຫ້ທ່ານຢູ່ໃນຖານະທີ່ສາມາດຕໍ່ ລອງລາຄາໄດ້.
- ທ່ານສາມາດສອບຖາມຂໍ້ມູນ ດ້ານການຕະຫຼາດຈາກຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ ຫຼື ພະແນກກະສິກຳ ແລະ ປ່າໄມ້ແຂວງ.
- ຫຼື ທ່ານສາມາດສອບຖາມລາຄາແກ່ນໝາກເຢົາທີ່ສູນຄົ້ນຄ້ວາທົດລອງພະລັງງານທົດແທນລາວ ຂອງພວກເຮົາໂດຍກົງຕາມທີ່ຢູ່ທີ່ໄດ້ສະແດງຢູ່ດ້ານໜ້າປົກຂອງຄູ່ມື ເຫຼັ້ມນີ້.